ທະນາຄານແຫ່ງ ສປປ ລາວ
BANK OF THE LAO PDR
NEWS
ໜ່ວຍງານຂ່າວສານ ພະແນກສັງລວມ ຫ້ອງການ ທຫລ
ໂທ /ແຟັກ ( 856-21) 260283

# ເຜີຍແຜ່ຄຳສັ່ງ ກັກ ຍຶດ ແລະ ອາຍັດທຶນ ໃຫ້ແກ່ການແຜ່ຜາຍອາວຸດທຳລາຍລ້າງຜານ






ສຳນັກງານຂໍ້ມູນຕ້ານການຟອກເງິນ (ສຕຟງ), ທະນາຄານແຫ່ງ ສປປ ລາວ ໃນນາມກອງເລຂາຄະນະກຳມະການແຫ່ງຊາດເພື່ອຕ້ານການຟອກເງິນ ແລະ ສະໜອງທຶນໃຫ້ແກ່ການກໍ່ການຮ້າຍໄດ້ຈັດກອງປະຊຸມເຜີຍແຜ່ຄຳສັ່ງວ່າດ້ວຍການກັກ ການຍຶດ ແລະ ອາຍັດທຶນທີ່ກ່ຽວຂ້ອງກັບການສະໜອງທຶນໃຫ້ແກ່ການແຜ່ຜານອາວຸດທຳລາຍລ້າງຜານ ສະບັບເລກທີ 20/ນຍ, ລົງວັນທີ 26 ພະຈິກ 2020 ແລະ ນິຕິກຳອີກຈຳນວນໜຶ່ງທີ່ຕິດພັນກັບພັນທະຂອງຫົວໜ່ວຍທີ່ມີໜ້າທີ່ລາຍງານ ຊຶ່ງໄດ້ຈັດຂຶ້ນໃນວັນທີ 5 ມີນາ 2021 ທີ່ ສະຖາບັນການທະນາຄານ ໂດຍການໃຫ້ກຽດເປັນປະທານໂດຍ ທ່ານ ໄຊສີ ສັນຕິວົງ ລັດຖະມົນຕີກະຊວງຍຸຕິທຳ, ຫົວໜ້າຄະນະຮັບຜິດຊອບວຽກງານນິຕິກຳ ແລະ ກົນໄກຊຶ່ງມີບັນດາທະນາຄານທຸລະກິດ, ສະຖາບັນການເງິນຈຸລະພາກທີ່ຮັບຝາກເງິນ, ບໍລິສັດໂອນເງິນດ່ວນ, ວິສາຫະກິດໄປສະນີ ແລະ ພາກສ່ວນກ່ຽວຂ້ອງໃນການຈັດຕັ້ງປະຕິບັດຄຳສັ່ງດັ່ງກ່າວ ເຂົ້າຮ່ວມ.

ທ່ານ ຈິນດາໄມ ວິໄລຫົງສ໌ ຮອງຫົວໜ້າ ສຕຟງ ແລະ ພະນັກງານຈາກສຳນັກງານດັ່ງກ່າວໄດ້ນຳສະເໜີເນື້ອໃນ ແລະ ຫຼັກການທີ່ໄດ້ກຳນົດໄວ້ໃນຄຳສັ່ງດັ່ງກ່າວຮັບປະກັນໃຫ້ພາກສ່ວນກ່ຽວຂ້ອງສາມາດນຳເອົາຂໍ້ກຳນົດ ແລະ ຫຼັກການໄປໝູນໃຊ້ເຂົ້າໃນການປະຕິບັດວຽກງານຂອງຕົນຢ່າງເປັນຮູບປະທຳ ຊຶ່ງມີຄຳສັ່ງວ່າດ້ວຍການກັກການຍຶດ ແລະ ອາຍັດທຶນທີ່ກ່ຽວຂ້ອງກັບການສະໜອງທຶນໃຫ້ແກ່ການແຜ່ຜາຍອາວຸດທຳລາຍລ້າງຜານສະບັບເລກທີ 20/ນຍ, ລົງວັນທີ 26 ພະຈິກ 2020; ຄຳສັ່ງວ່າດ້ວຍ ການກັກ ການຍຶດ ແລະ ການອາຍັດ ທຶນທີ່ພົວພັນກັບຜູ້ກໍ່ການຮ້າຍ ແລະ ການສະໜອງທຶນໃຫ້ແກ່ການກໍ່ການຮ້າຍ ສະບັບເລກທີ 03/ນຍ, ລົງວັນທີ 11 ກຸມພາ 2016 ແລະ ຮ່າງຂໍ້ຕົກລົງວ່າດ້ວຍ ການຊອກຮູ້ລູກຄ້າ ແລະ ການເພີ່ມທະວີການເອົາໃຈໃສ່ລູກຄ້າ (ສະບັບປັບປຸງ).

ພ້ອມດຽວກັນນີ້, ກໍ່ເປັນການຈັດຕັ້ງປະຕິບັດແຜນວຽກໃນການກະກຽມຄວາມພ້ອມຮອງຮັບໃຫ້ແກ່ການປະເມີນການຈັດຕັ້ງປະຕິບັດວຽກງານຕ້ານ ສະກັດກັ້ນການຟອກເງິນ ແລະ ການສະໜອງທຶນໃຫ້ແກ່ການກໍ່ການຮ້າຍ ຕາມພັນທະສາກົນຂອງ ສປປ ລາວ ໃນຄັ້ງທີ 2 (ລະຫວ່າງ ປີ 2020-2021).

**# ຂ່າວ: ຣັດສະໝີ ດວງສັດຈະ**

**# ພາບ: ສົມພົດ ທຳມະວົງ**